ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານຮ່ວມພັດທະນາ ມະຫາຊົນ

ເລກທີ 055 /ທຄຮ
ນະຄອນຫຼວງວຽງຈັນ, ວັນທີ 26 ມີນາ 2026

ມະຕິ
ກອງປະຊຸມສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ ສະໄໝວິສາມັນ ຄັ້ງທີ I, ປະຈຳປີ 2026

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງບໍລິສັດຫຼັກຊັບ ແລະ ບໍລິສັດ ຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018;
- ອີງຕາມ ກົດລະບຽບຂອງທະນາຄານຮ່ວມພັດທະນາ ມະຫາຊົນ ສະບັບເລກທີ 064/ທຄຮ, ລົງວັນທີ 5 ມີນາ 2026.

ຜ່ານການຄົ້ນຄວ້າ ແລະ ແລກປ່ຽນຄຳເຫັນຂອງບັນດາສະມາຊິກສະພາບໍລິຫານ ຢ່າງເລິກເຊິ່ງຕໍ່ກັບແຕ່ລະວາລະ ຂອງກອງປະຊຸມສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ (ທຄຮ) ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026 (ຕໍ່ໄປນີ້ຮຽກວ່າ: ກອງປະຊຸມ), ໄດ້ເປີດຂຶ້ນ ໃນເວລາ: 15:00 ໂມງ, ຂອງວັນທີ 26 ມີນາ 2026, ທີ່ສຳນັກງານໃຫຍ່ ທະນາຄານຮ່ວມພັດທະນາ ມະຫາຊົນ, ໂດຍການເປັນປະທານຂອງ ທ່ານ ວິໄລ ສີພະພອນ, ປະທານສະພາບໍລິຫານ ໂດຍ ມີສະມາຊິກສະພາບໍລິຫານ ຈຳນວນ 8 ທ່ານ ເຂົ້າຮ່ວມ. ມີຄະນະອຳນວຍການ ແລະ ພະແນກກ່ຽວຂ້ອງເຂົ້າຮ່ວມ ເປັນຜູ້ ສັງເກດການ.

ກອງປະຊຸມສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ ມີມະຕິຕົກລົງ ດັ່ງນີ້:

ມາດຕາ 1 ເຫັນດີຮັບຮອງເອົາອັດຕາການຈ່າຍເງິນປັນຜົນ ປະຈຳປີ 2025 ເຊິ່ງລາຍລະອຽດ ມີດັ່ງນີ້:
- ອັດຕາການຈ່າຍເງິນປັນຜົນຕໍ່ຮຸ້ນ: 800 ກີບ/ຮຸ້ນ;
- ມູນຄ່າເງິນປັນຜົນທັງໝົດ: 600,000,000,000 ກີບ.

ມາດຕາ 2 ການຈັດຕັ້ງປະຕິບັດ

ມອບໃຫ້ຄະນະອຳນວຍການ ທຄຮ ຈັດຕັ້ງປະຕິບັດມະຕິກອງປະຊຸມ ສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃຫ້ໄດ້ຮັບຜົນດີ.

ມາດຕາ 3 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານກອງປະຊຸມ

ທະນາຄານ ຮ່ວມພັດທະນາ ມະຫາຊົນ JOINT DEVELOPMENT BANK Public ນະຄອນ ຫຼວງ ວຽງຈັນ ແຫ່ງ ສປປ ລາວ

ວິໄລ ສີພະພອນ